ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກອຸດສາຫະກຳ ແລະ ການຄ້າ

ເລກທີ 1398 / ອຄ.ນວ.ອຫ

ວັນທີ 02 ຕຸລາ 2021

# ແຈ້ງການແນະນຳ

ເຖິງ: - ທ່ານ ຫົວໜ້າຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ 09 ຕົວເມືອງ ໃນນະຄອນຫຼວງວຽງຈັນ.

- ທ່ານ ຜູ້ອຳນວຍການໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທົ່ວນະຄອນຫຼວງວຽງຈັນ.

ເລື່ອງ: ເພີ່ມທະວີການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນ, ຄວບຄຸມ ເພື່ອຕ້ານການລະບາດຂອງພະຍາດໂຄວິດ-19 ຢູ່ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນນະຄອນຫຼວງວຽງຈັນ ໄລຍະວັນທີ 01 – 15 ຕຸລາ 2021.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ ໂຄວິດ-19 (COVID-19) ເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021, ສະບັບເລກທີ 1177/ຫສນຍ,ລົງວັນທີ 15 ກັນຍາ 2021 ແລະ ສະບັບເລກທີ 1260/ຫສນຍ, ລົງວັນທີ 30 ກັນຍາ 2021.
- ອີງຕາມ ແຈ້ງການ ການສືບຕໍ່ເພີ່ມທະວີການຈັດຕັ້ງປະຕິບັດມາດຕະການປ້ອງກັນຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 37/ຈນວ, ລົງວັນທີ 30 ກັນຍາ 2021.
- ອີງຕາມ ແຈ້ງການເພີ່ມທະວີມາດຕະການປ້ອງກັນຄວບຄຸມ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 0913/ ອຄ.ດພກ, ລົງວັນທີ 01 ຕຸລາ 2021.

**ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແນະນຳໃຫ້ປະຕິບັດ ດັ່ງນີ້:**

1. ປິດໂຮງງານທີ່ມີຜູ້ຕິດເຊື້ອໃນໂຮງງານ ເພື່ອໃຫ້ຄະນະສະເພາະກິດ ດຳເນີນຂັ້ນຕອນການຄວບຄຸມ, ກວດສອບ ແລະ ປະເມີນຄວາມສ່ຽງ. ພາຍຫຼັງຜ່ານການກວດສອບ ແລະ ປະເມີນແລ້ວ ຈຶ່ງສະເໜີຕໍ່ຄະນະສະເພາະກິດ ເພື່ອກວດກາປະເມີນຄວາມສ່ຽງ ແລ້ວຈຶ່ງພິຈາລະນາອະນຸຍາດເປີດຄືນ.

2. ປິດໂຮງງານທີ່ຢູ່ໃນເຂດທີ່ມີການລະບາດໃນຊຸມຊົນ (ເຂດແດງ) ຍົກເວັ້ນ: ①ໂຮງງານທີ່ຜ່ານການປະເມີນຄວາມສ່ຽງ ແລະ ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ, ②ໂຮງງານຜະລິດສິນຄ້າບໍລິໂພກ, ③ໂຮງງານຜະລິດຢາປົວພະຍາດ, ອຸປະກອນການແພດ, ເຄື່ອງປ້ອງກັນການລະບາດ ແລະ ④ ໂຮງງານທີ່ນຳໃຊ້ພະນັກງານ-ກຳມະກອນ ຢູ່ຫໍພັກພາຍໃນໂຮງງານເທົ່ານັ້ນ ແຕ່ຕ້ອງໄດ້ຮັບການກວດກາ ແລະ ປະເມີນຄວາມສ່ຽງຈາກໜ່ວຍງານກວດກາ ແລະ ການປະຕິບັດເງື່ອນໄຂ ແລະ ມາດຕະການສຳລັບ ພາກທຸລະກິດ ໃນໄລຍະທີ່ມີການລະບາດຂອງພະຍາດໂຄວິດ-19 ຢູ່ໃນໂຮງງານອຸດສາຫະກຳປຸງແຕ່ງກ່ອນ;



Scanned with CamScanner

3. ອະນຸຍາດໃຫ້ເປີດບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຢູ່ນອກເຂດແດງ ແຕ່ຕ້ອງໄດ້ຜ່ານການປະເມີນສະຖານທີ່ເຮັດວຽກໃຫ້ມີຄວາມປອດໄພ (ຕາມແບບຟອມປະເມີນ 10 ຂໍ້ແລະ 35 ຕົວຊີ້ວັດ) ຕາມທີ່ກຳນົດໄວ້ໃນແຈ້ງການຂອງຄະນະສະເພາະກິດຂັ້ນສູນກາງ ເລກທີ 4303/ສພກ,ລົງວັນທີ 17 ກັນຍາ 2021;

4. ທຸກໂຮງງານຕ້ອງປະຕິບັດຕາມມາດຕະການທີ່ຄະນະສະເພາະກິດວາງອອກ ດັ່ງນີ້:

4.1 ສ້າງແຜນມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ, ປະຕິບັດໃຫ້ຖືກຕ້ອງ ຄົບຖ້ວນ ແລະ ປະເມີນສະຖານທີ່ເຮັດວຽກຂອງໂຮງງານໃຫ້ມີຄວາມປອດໄພ ເພື່ອຕອບໂຕ້ການລະບາດຂອງພະຍາດໂຄວິດ-19 (ຕາມແບບຟອມປະເມີນ 10 ຂໍ້ແລະ 35 ຕົວຊີ້ວັດ);

4.2 ພະນັກງານ-ກຳມະກອນທຸກຄົນ ຕ້ອງໄດ້ຮັບວັກຊີນຢ່າງໜ້ອຍໜຶ່ງເຂັມ ຈຶ່ງອະນຸຍາດໃຫ້ເຮັດວຽກໃນໂຮງງານໄດ້;

4.3 ກວດວັດແທກອຸນຫະພູມ, ກໍລະນີພົບຜູ້ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປ່ຽວຂອງໂຮງງານ ຫຼື ມີຜູ້ຕິດເຊື້ອ ໃຫ້ແຈ້ງຄະນະສະເພາະກິດ ຫຼື ສາຍດ່ວນ 165, 166 ແລະ ລາຍງານຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເພື່ອດຳເນີນການກວດສອບ ແລະ ແນະນຳ;

4.4 ປະຕິບັດມາດຕະການຮັກສາໄລຍະຫ່າງຂອງການເຮັດວຽກ ເພື່ອຫຼຸດຄວາມແອອັດຢູ່ໃນສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ຫໍພັກ ໂດຍຮັກສາໄລຍະຫ່າງ 1 ແມັດ ຂຶ້ນໄປ;

4.5 ໃສ່ຜ້າປິດປາກ-ດັງ ທຸກຄັ້ງ ໃນເວລາຢູ່ສະຖານທີ່ເຮັດວຽກ ແລະ ສະຖານທີ່ທີ່ມີຄົນຈຳນວນຫຼາຍ;

4.6 ຈັດໃຫ້ມີນ້ຳດື່ມສະອາດ, ບ່ອນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມືໃຫ້ພຽງພໍ ແລະ ຖືກຕາມຫຼັກການອະນາໄມ;

4.7 ອະນາໄມ ແລະ ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສຳຜັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

4.8 ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວ ຫຼື ກິດຈະກຳອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອທຸກຮູບແບບ.

5. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ມີຈຸດປະສົງຢາກສະເໜີຂໍເປີດການດຳເນີນກິດຈະການໂຮງງານ ໃຫ້ເຮັດໜັງສືສະເໜີດັ່ງນີ້: ກຳມະກອນ 201 ຄົນຂຶ້ນໄປ ສະເໜີຫາ ກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ; ກຳມະກອນ 51-200 ຄົນ ສະເໜີຫາພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ; ກຳມະກອນ 50 ຄົນລົງມາ ສະເໜີຫາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ;

6. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ໄດ້ເປີດດຳເນີນກິດຈະການນັ້ນ ຫ້າມນຳໃຊ້ພະນັກງານ-ກຳມະກອນ ທີ່ມາຈາກເຂດແດງ ເດັດຂາດ, ສຳລັບໂຮງງານທີ່ມີເງື່ອນໄຂ ກໍໃຫ້ຈັດສັນສະຖານທີ່ພັກຢູ່ກັບທີ່ໃຫ້ພະນັກງານ-ກຳມະກອນຂອງຕົນ ເພື່ອຫຼຸດຜ່ອນຄວາມສ່ຽງໃນການແຜ່ເຊື້ອຢູ່ໃນໂຮງງານ ;

7. ທຸກໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ກ່ອນດຳເນີນການຜະລິດ ຜູ້ອຳນວຍການ/ເຈົ້າຂອງໂຮງງານ ຕ້ອງ ໄດ້ເຮັດສັນຍາກັບຄະນະສະເພາະກິດ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດມາດຕະການຮັກສາຄວາມປອດໄພຂອງສະຖານທີ່ເຮັດວຽກ, ສະຖານທີ່ພັກເຊົາ ແລະ ມີແຜນຮອງຮັບໃນກໍລະນີມີພະນັກງານ-ກຳມະກອນຕິດເຊື້ອ ແລະ ແຜ່ເຊື້ອໂຄວິດ-19 ໂດຍມີຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເຊັ່ນ: ຄ່າສະຖານທີ່ຈຳກັດບໍລິເວນຜູ້ສຳຜັດໃກ້ຊິດ, ຄ່າສະຖານທີ່ປິ່ນປົວຜູ້ຕິດເຊື້ອ, ຄ່າກິນຢູ່ພັກເຊົາ, ຄ່າດຳເນີນມາດຕະການທາງການແພດ ແລະ ອື່ນໆ;

8. ສຳລັບໂຮງງານທີ່ປິດ ແລະ ໄດ້ຮັບຜົນກະທົບຕໍ່ການປິດໂຮງງານ ໃຫ້ສັງລວມຂໍ້ມູນ ແລະ ລາຍງານຜົນກະທົບຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ຫລື ຫ້ອງການອຸດສາຫະກຳ ແລະ ການເມືອງ ທີ່ໂຮງງານຕັ້ງຢູ່ ເພື່ອຈະສັງລວມ ແລ້ວລາຍງານຕໍ່ຂັ້ນເທິງຮັບຊາບ ແລະ ພ້ອມກັນຫາວິທີແກ້ໄຂ. ໃຫ້ທຸກໂຮງງານລາຍງານຂໍ້ມູນສະຖິຕິຈຳນວນພະນັກງານ-ກຳມະກອນທັງໝົດ ແລະ ຈຳນວນທີ່ໄດ້ຮັບສັກວັກຊີນເປັນລາຍລັກອັກສອນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ 5.



Scanned with CamScanner

໙. ການຈັດຕັ້ງປະຕິບັດ ແລະ ມາດຕະການປັບໃໝ:

ມອບໃຫ້ພະແນກອຸດສາຫະກຳ ແລະ ຫັດຖະກຳ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ສົມທົບກັບ ຄະນະສະເພາະກິດຂັ້ນເມືອງ ແລະ ອຳນາດການປົກຄອງບ້ານ ເປັນແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນເມືອງຂອງຕົນຈັດຕັ້ງປະຕິບັດຢ່າງເຂັ້ມງວດ; ພ້ອມທັງຕິດຕາມກວດກາ, ລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເປັນປະຈຳວັນ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ (ບໍ່ອະນຸຍາດໃຫ້ເລືອກປະຕິບັດບັນທຶກຕັກເຕືອນ) ດັ່ງນີ້:

- ບຸກຄົນລະເມີດ ໃຫ້ປັບໃໝ 3.000.000 ກີບ /ຄົນ/ຄັ້ງ.
- ນິຕິບຸກຄົນລະເມີດ ໃຫ້ປັບໃໝ 10.000.000 ກີບ /ນິຕິບຸກຄົນ/ຄັ້ງ.

໑໐. ການປະສານສົ່ງເອກະສານ ທາງວອດແອັບ:

- ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ 020 9222 1234.
- ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ 020 55669694, 020 22226438.
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ: ຈັນທະບູລີ020 55313725, ສີໂຄດຕະບອງ020 55567585, ໄຊເສດຖາ020 22234475, ສີສັດຕະນາກ 020 55685975, ນາຊາຍທອງ020 55100019, ຫາດຊາຍຟອງ020 55582224, ໄຊທານີ020 22035133, ສັງທອງ 020 56699047, ປາກງື່ມ 020 55801604
- ເອກະສານ: ໃບສະເໜີ, ຄັດຕິດລາຍຊື່ພະນັກງານ-ກຳມະກອນ ທີ່ນຳໃຊ້ໃນໂຮງງານໃຫ້ລະອຽດ (ຊື່ ແລະ ນາມສະກຸນ, ບ່ອນຢູ່ປະຈຸບັນ, ເບີໂທທີ່ຕິດຕໍ່ໄດ້). ໂຮງງານຕ້ອງໄດ້ປະເມີນຕົນເອງກ່ອນ ທີ່ຄະນະສະເພາະກິດຈະລົງກວດກາ ຕາມແບບຟອມ ທີ່ສາມາດເຂົ້າດາວໂຫຼດແບບຟອມທາງ QR Code.

໑໐. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນແຈ້ງການ ສະບັບເລກທີ ເລກທີ 1244 /ອຄ.ນວ.ອຫ, ລົງວັນທີ 07 ກັນຍາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການແນະນຳສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າພະແນກ

ບ. ວັນນະພົນ ສີແສງສານ

ບ່ອນສົ່ງ
- ຫ້ອງການກະຊວງ, ອຸດສາຫະກຳ ແລະ ການຄ້າ (ເພື່ອລາຍງານ).
- ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງ ອຄ (ເພື່ອລາຍງານ).
- ຫ້ອງວ່າການ ນະຄອນຫຼວງວຽງຈັນ ( ເພື່ອລາຍງານ ).
- ທ່ານເຈົ້າເມືອງ 09 ຕົວເມືອງ (ເພື່ອຊາບ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ).
- ຫ້ອງການ ປກສ ນວ (ເພື່ອລາຍງານ)
- ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ 09 ຕົວເມືອງ (ເພື່ອກວດກາ ແລະ ປະຕິບັດ).
- ຫ້ອງການບ້ານ ທີ່ໂຮງງານຕັ້ງຢູ່ (ເພື່ອຕິດຕາມກວດກາ).
- ໂຮງງານ (ເພື່ອປະຕິບັດ).

❖ ສະແກນ QR Code ເພື່ອດາວໂຫຼດເອກະສານ ( 04 ເອກະສານ )



Scanned with CamScanner